# ບົດບັນທຶກກອງປະຊຸມຄັ້ງທີ VI
# ຂອງຄະນະກຳມາທິການຮ່ວມມື ດ້ານເສດຖະກິດ, ການຄ້າ ແລະ
# ເຕັກນິກ ລາວ-ຈີນ ແລະ ຈີນ-ລາວ

ກອງປະຊຸມຄັ້ງທີ VI ຂອງຄະນະກຳມາທິການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ເຕັກນິກ ລາວ-ຈີນ ແລະ ຈີນ-ລາວ ໄດ້ຈັດຂຶ້ນ ໃນວັນທີ 17 ກໍລະກົດ 2014, ທີ່ ນະຄອນຫຼວງ ປັກກິ່ງ, ສປ ຈີນ, ພາຍໃຕ້ການເປັນປະທານຮ່ວມ ຂອງ ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ປະທານຄະນະກຳມາທິການຮ່ວມມືລາວ-ຈີນ ແລະ ພະນະທ່ານ ນາງ ກາວ ຢຽນ ລັດຖະມົນຕີຊ່ວຍວ່າການກະຊວງການຄ້າ ແຫ່ງ ສປ ຈີນ, ປະທານ ຄະນະກຳມາທິການຮ່ວມມືຈີນ-ລາວ. ລາຍຊື່ຄະນະຜູ້ແທນ ເຂົ້າຮ່ວມກອງປະຊຸມຂອງທັງສອງຝ່າຍ ໄດ້ຄັດຕິດມາພ້ອມນີ້ (ເອກະສານຊ້ອນທ້າຍ 1 ແລະ 2).

ໃນກອງປະຊຸມດັ່ງກ່າວ ທັງສອງຝ່າຍໄດ້ຜັດປ່ຽນກັນທົບທວນຄືນສະພາບການຈັດຕັ້ງປະຕິບັດການຮ່ວມມື ໃນໄລຍະ 2 ປີ ນັບແຕ່ກອງປະຊຸມ ຄັ້ງທີ V ເປັນຕົ້ນມາ, ໄດ້ປຶກສາຫາລືກັນກ່ຽວກັບທິດທາງ ແລະ ມາດຕະການ ໃນການປັບປຸງ ແລະ ເພີ່ມທະວີການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ເຕັກນິກ ລະຫວ່າງ ລາວ-ຈີນ ໃນຕໍ່ໜ້າ ໂດຍອີງຕາມຫົວຂໍ້ສົນໃຈ ທີ່ສອງຝ່າຍໄດ້ສະເໜີຂຶ້ນ. ລາຍລະອຽດມີດັ່ງລຸ່ມນີ້:

## I. <u>ທົບທວນຄືນການຈັດຕັ້ງປະຕິບັດວຽກງານຮ່ວມມື ນັບແຕ່ກອງປະຊຸມຄັ້ງທີ 5 ເປັນຕົ້ນມາ:</u>

- ທັງສອງຝ່າຍໄດ້ເປັນເອກະພາບກັນຕີລາຄາວ່າ: ພາຍໃຕ້ການເອົາໃຈໃສ່ຂອງການນຳຂອງສອງປະເທດ, ການຮ່ວມມືດ້ານເສດຖະກິດ-ເຕັກນິກ ແລະ ການຄ້າ ລະຫວ່າງ ລາວ-ຈີນ ໃນ 2 ປີ ທີ່ຜ່ານມາໄດ້ຂະຫຍາຍຕົວເພີ່ມຂຶ້ນໄວ. ໃນປີ 2013, ການຄ້າສອງຝ່າຍໄດ້ບັນລຸ 2,74 ຕື້ ໂດລາສະຫະລັດ, ທຽບໃສ່ປີ 2012 ເພີ່ມຂຶ້ນ 58,6%; ສະເພາະໃນ 5 ເດືອນຕົ້ນປີ 2014 ຕົວເລກການຄ້າບັນລຸເຖິງ 1,9 ຕື້ ໂດລາສະຫະລັດ ແລ້ວ ທຽບໃສ່ໄລຍະດຽວກັນຂອງປີ 2013 ແມ່ນເພີ່ມຂຶ້ນ 145%; ດ້ານການລົງທຶນ, ຮອດທ້າຍເດືອນ 5/2014 ມູນຄ່າການລົງທຶນຂອງວິສາຫະກິດຈີນ ຢູ່ ລາວ ມີ 3,11 ຕື້ ໂດລາສະຫະລັດ ເຮັດໃຫ້ຈີນ ເປັນອັນດັບທີ 1 ຂອງການລົງທຶນຕ່າງປະເທດ ຢູ່ ລາວ ແລະ ສປປ ລາວ ກາຍເປັນອັນດັບທີ 3 ຂອງບັນດາປະເທດອາຊຽນ ສຳລັບການລົງທຶນຂອງຈີນ; ໃນ 2 ປີ ທີ່ຜ່ານມາ ການຊ່ວຍເຫຼືອຂອງຈີນຕໍ່ລາວ ກໍໄດ້ເພີ່ມຂຶ້ນ ຄື: ການຊ່ວຍເຫຼືອລ້າ ແລະ ເງິນກູ້ບໍ່ມີດອກເບ້ຍ 3,1 ຕື້ ຢວນ ແລະ ເງິນກູ້ດອກເບ້ຍຜ່ອນຜັນ 860 ລ້ານ ໂດລາສະຫະລັດ.

- ທັງສອງຝ່າຍມີຄວາມເພິ່ງພໍໃຈ ຕໍ່ໝາກຜົນຂອງການຮ່ວມມືດັ່ງກ່າວ, ເຫັນວ່າໝາກຜົນນັ້ນໄດ້ປະກອບສ່ວນຢ່າງສຳຄັນ ແລະ ຕັ້ງໜ້າເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ, ເປັນການເພີ່ມທະວີມິດຕະພາບ ແລະ ຄວາມໄວ້ເນື້ອເຊື່ອໃຈກັນ ລະຫວ່າງ 2 ປະເທດ, ເຮັດໃຫ້ບົດບາດ ແລະ ຊື່ສຽງຂອງ ຈີນ ແລະ ລາວ ສູງເດັ່ນຂຶ້ນຕື່ມ ໃນເວທີສາກົນ ແລະ ພາກພື້ນ.

- ສອງຝ່າຍມີຄວາມເຊື່ອໝັ້ນຕໍ່ອະນາຄົດອັນແຈ່ມໃສຂອງການຮ່ວມມື ແລະ ຈະສືບຕໍ່ພະຍາຍາມຮ່ວມກັນ ເພື່ອເຮັດໃຫ້ການຮ່ວມມືໃນຕໍ່ໜ້າມີບາດກ້າວບຸກທະລຸໃໝ່.

- ຝ່າຍລາວໄດ້ສະແດງຄວາມຂອບໃຈ ຕໍ່ລັດຖະບານ ແລະ ປະຊາຊົນຈີນ ທີ່ໄດ້ໃຫ້ການຊ່ວຍເຫຼືອອັນລ້ຳຄ່າ ແກ່ ສປປ ລາວ. ຝ່າຍຈີນ ກໍໄດ້ຢືນຢັນ ຈະສືບຕໍ່ໃຫ້ການຊ່ວຍເຫຼືອລາວ ຕາມຄວາມສາມາດຂອງຕົນ.

## II. ການປຶກສາຫາລືຕາມຫົວຂໍ້ສົນໃຈ ຂອງຝ່າຍລາວ:

### 1. ກ່ຽວກັບໂຄງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ.

- ຝ່າຍລາວ ໄດ້ແຈ້ງໃຫ້ຊາບ ກ່ຽວກັບຜົນຂອງກອງປະຊຸມ ຄະນະປະສານງານທາງລົດໄຟລາວ-ຈີນ ທີ່ໄຂຂຶ້ນຢູ່ ປັກກິ່ງ ແຕ່ວັນທີ 14-16 ກໍລະກົດ 2014, ເຊິ່ງເຫັນວ່າການປຶກສາຫາລື ມີຄວາມຄືບໜ້າ ແລະ ມີຜົນສຳເລັດເປັນຢ່າງດີ. ແຕ່ຍັງພົບບັນຫາຫຍຸ້ງຍາກ ແມ່ນການປະກອບທຶນເບື້ອງຕົ້ນຂອງຝ່າຍລາວ ເຊິ່ງບໍ່ສາມາດຕອບສະໜອງຄວາມຕ້ອງການໃນອັດຕາສ່ວນຖືຮຸ້ນແບບໃໝ່. ສະເໜີຝ່າຍຈີນ ພິຈາລະນາໃຫ້ກູ້ຢືມເງິນດ້ວຍດອກເບ້ຍພິເສດ ເພື່ອມາເພີ່ມໃສ່ເງິນລົງທຶນເບື້ອງຕົ້ນຂອງຝ່າຍລາວໃຫ້ພຽງພໍ. ນອກຈາກນັ້ນ ກໍໄດ້ສະເໜີຝ່າຍຈີນພິຈາລະນາຊ່ວຍເຫລືອໃນການໃຫ້ທຶນຝຶກອົບຮົມວິຊາການຄຸ້ມຄອງການກໍ່ສ້າງທາງລົດໄຟ ຈຳນວນ 25 ທຶນ ກຳນົດເວລາຝຶກອົບຮົມ 2 ເດືອນ.

- ຝ່າຍຈີນມີຄຳເຫັນວ່າໂຄງການສ້າງເສັ້ນທາງລົດໄຟລາວ-ຈີນ ນີ້, ການນຳກໍຄືລັດຖະບານຈີນ ໃຫ້ຄວາມສຳຄັນທີ່ສຸດ ໂດຍຖືວ່າເປັນໂຄງການທີ່ມີລັກສະນະຍຸດທະສາດ. ເຈດຈຳນົງ ແລະ ການຕັດສິນໃຈທາງການເມືອງແມ່ນຊັດເຈນ ບໍ່ມີຫຍັງປ່ຽນແປງ. ແຕ່ຍ້ອນໂຄງການນີ້ເປັນໂຄງການໃຫຍ່ມູນຄ່າການລົງທຶນສູງ ເພື່ອຮັບປະກັນໃຫ້ມີການປະຕິບັດແບບຍືນຍົງ ແລະ ມີປະສິດທິຜົນທາງເສດຖະກິດ, ສອງຝ່າຍ ຍັງຕ້ອງໄດ້ຄົ້ນຄວ້າ ແລະ ປຶກສາຫາລືເລິກເຊິ່ງຕື່ມໃນບັນຫາສຳຄັນຕ່າງໆ. ປະຈຸບັນ ຄະນະກຳມະການເພື່ອການພັດທະນາ ແລະ ປະຕິຮູບ ສປ ຈີນ ແລະ ພາກສ່ວນກ່ຽວ ຂ້ອງ ກຳລັງເລັ່ງລັດສຶກສາຄົ້ນຄວ້າດ້ານວິທີການປະຕິບັດ, ໂຄງສ້າງດ້ານເສດຖະກິດ ແລະ ເຕັກນິກ, ນະໂຍບາຍຄ້ຳປະກັນ ແລະ ອື່ນໆ. ສະເໜີຝ່າຍລາວ ຄິດຄົ້ນຫຼາຍວິທີໃນການແກ້ໄຂເງິນປະກອບທຶນ ແລະ ນະໂຍບາຍສະໜັບສະໜູນ.

- ກ່ຽວກັບການສະເໜີໃຫ້ການຊ່ວຍເຫຼືອຝຶກອົບຮົມວິຊາການນັ້ນ, ສອງຝ່າຍຈະອີງຕາມຄວາມຄືບໜ້າຂອໂຄງການເພື່ອຈັດຕັ້ງປະຕິບັດການຝຶກອົບຮົມດັ່ງກ່າວ.

### 2. ຄວາມຕ້ອງການດ້ານການຊ່ວຍເຫຼືອ

#### 2.1. ໂຄງການເງິນກູ້

- ຝ່າຍລາວໄດ້ສະເໜີຝ່າຍຈີນພິຈາລະນາເປັນພິເສດໂຄງການທີ່ຝ່າຍລາວເຫັນວ່າສຳຄັນຫຼາຍ ແລະ ຈຳເປັນຮີບດ່ວນ 3 ໂຄງການເພື່ອກະກຽມຕ້ອນຮັບ ວັນສ້າງຕັ້ງ ພັກ ປະຊາຊົນ ປະຕິວັດລາວ ຄົບຮອບ 60 ປີ ແລະ ວັນສະຖາປະນາ ສປປ ລາວ ຄົບຮອບ 40 ປີ ໃນປີ 2015 ແລະ ກອງປະຊຸມໃຫຍ່ ຄັ້ງທີ 10 ຂອງພັກ ປະຊາຊົນປະຕິວັດລາວ ພ້ອມດ້ວຍການເປັນເຈົ້າພາບຈັດກອງປະຊຸມສຸດຍອດ ASEAN ໃນປີ 2016 ຄື:

  1) ໂຄງການພັດທະນາກວມລວມນະຄອນຫຼວງວຽງຈັນ;

  2) ໂຄງການປັບປຸງແສງສະຫວ່າງ ແລະ ລະບົບການຄວບຄຸມການຈາລະຈອນ ໃນນະຄອນຫຼວງວຽງຈັນ;

  3) ໂຄງການຄຸ້ມຄອງສູນອິນເຕີເນັດແຫ່ງຊາດ (ໃນນີ້ ມີ 2 ໂຄງການຍ່ອຍຄື: 1. ໂຄງການຕ້ານໂຈລະກຳທາງອິນເຕີເນັດ ຂອງກະຊວງປ້ອງກັນຄວາມສະຫງົບ 2. ໂຄງການຄຸ້ມຄອງອິນເຕີເນັດຂອງກະຊວງປ້ອງກັນປະເທດ).

- ນອກນັ້ນຍັງສະເໜີຝ່າຍຈີນພິຈາລະນາຕື່ມ ອີກ 2 ໂຄງການ

  4) ສະເຫນີຂໍເງິນກູ້ເພື່ອສ້າງສະຫນາມບິນເມືອງຕົ້ນເຜິ້ງ, ແຂວງບໍ່ແກ້ວ.

5) ສະເໜີຂໍເງິນກູ້ດອກເບ້ຍຜ່ອນຜັນໃຫ້ໂຮງງານທາອາຫານສັດ ຢູ່ ແຂວງອຸດົມໄຊ ທີ່ແຂວງຢູນນານຊ່ວຍເຫຼືອກໍ່ສ້າງແລ້ວນັ້ນ ເພື່ອສ້າງເງື່ອນໄຂໃຫ້ນັກທຸລະກິດລາວ ແລະ ຈີນ ຮ່ວມມືກັນໃນການຜະລິດອາຫານສັດ ຕິດພັນກັບການສົ່ງເສີມການລ້ຽງສັດ ເພື່ອປ້ອນຕະຫລາດພາຍໃນ ແລະ ສົ່ງອອກ. ໂຮງງານນີ້ຈະຕິດພັນກັບສູນສາທິດ ແລະ ບໍລິການເຕັກນິກກະສິກໍາຮ່ວມມືລາວ-ຈີນ.

- ຝ່າຍຈີນມີຄໍາເຫັນວ່າ:

- ໂຄງການຕ້ານໂຈລະກໍາທາງອິນເຕີເນັດ ຂອງ ກະຊວງ ປກສ ນັ້ນ, ປະຈຸບັນ EXIM Bank ຂອງ ສປ ຈີນ ໄດ້ສໍາເລັດການປະເມີນຜົນ ແລະ ກະຊວງການຄ້າຈີນ ກໍໄດ້ສໍາເລັດຂັ້ນຕອນການອະນຸມັດແລ້ວ, ມີແຜນຈະເຊັນສັນຍາ ໃນໂອກາດການຢ້ຽມຢາມ ສປ ຈີນ ຂອງ ທ່ານ ປະທານ ຈູມມາລີ ໄຊຍະສອນ ໃນທ້າຍເດືອນ ກໍລະກົດນີ້.

- ສໍາລັບໂຄງການພັດທະນາແບບກວມລວມນະຄອນຫຼວງວຽງຈັນ ແລະ ໂຄງການຄຸ້ມຄອງອິນເຕີເນັດຂອງກະຊວງປ້ອງກັນປະເທດ ນັ້ນ, ທະນາຄານ EXIM Bank ຂອງ ສປ ຈີນ ກໍາລັງປະເມີນຜົນຢູ່.

- ໂຄງການປັບປຸງແສງສະຫວ່າງ ແລະ ລະບົບການຄວບຄຸມການຈາລະຈອນ ໃນນະຄອນຫຼວງວຽງຈັນ, ຝ່າຍຈີນຫວັງວ່າຝ່າຍລາວ ຈະສະເໜີເອກະສານຂໍເງິນກູ້ ຕໍ່ຝ່າຍຈີນ ໂດຍໄວ.

- ນອກນັ້ນ, ໂຄງການປັບປຸງກໍ່ສ້າງເສັ້ນທາງ ແຕ່ປາກມອງ ຫາ ຫຼວງພະບາງ, ບໍລິສັດຈີນ ໄດ້ດໍາເນີການສຶກສາຄວາມເປັນໄປໄດ້ ແລະ ປຶກສາກັບຝ່າຍລາວລ່ວງໜ້າແລ້ວ. ໃນຂັ້ນຕໍ່ໄປ, ທະນາຄານຂອງຝ່າຍຈີນ ຈະດໍາເນີນການປະເມີນ ແລະ ຝ່າຍຈີນກໍຈະຄົ້ນຄວ້າສະໜອງທຶນໃຫ້ແກ່ໂຄງການດັ່ງກ່າວອີງຕາມການປະເມີນຂອງທະນາຄານ.

## 2.2. ໂຄງການເງິນຊ່ວຍເຫຼືອລ້າ ແລະ ເງິນກູ້ບໍ່ມີດອກເບ້ຍ

- ຝ່າຍລາວໄດ້ສະເໜີ ໑ ໂຄງການ ຄື:

1) ໂຄງການກໍ່ສ້າງເຮືອນຮັບແຂກສໍານັກງານປະທານປະເທດໄລຍະ 2.

2) ໂຄງການກໍ່ສ້າງກັນເຈື່ອນຂອງໂຄງການກໍ່ສ້າງຈຸດປະສານງານປະຕິບັດກົດໝາຍ ແລະ ລາດຕະເວນຮ່ວມ ຢູ່ບ້ານຊຽງກົກທີ່ໄດ້ຮັບການຊ່ວຍເຫຼືອລ້າຈາກລັດຖະບານ ສປ ຈີນ.

3) ໂຄງການກໍ່ສ້າງສະຖາບັນຂົງຈື້ ທີ່ມະຫາວິທະຍາໄລແຫ່ງຊາດ.

4) ໂຄງການຊ່ວຍເຫຼືອດ້ານເຕັກນິກ ແລະ ອຸປະກອນສໍາລັບການສໍາຫຼວດພົນລະເມືອງທົ່ວປະເທດ ຄັ້ງທີ 4.

5) ໂຄງການສະໜອງອຸປະກອນຮັບໃຊ້ການກະກຽມເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ປີ 2016 ທີ່ນະຄອນຫຼວງວຽງຈັນ.

6) ໂຄງການພັດທະນາສູນສາທິດ ແລະ ບໍລິການເຕັກນິກກະສິກໍາ ຢູ່ແຂວງອຸດົມໄຊ, ເຊິ່ງຝ່າຍລາວ ເຫັນວ່າຍັງມີຄວາມຕ້ອງການຮ່ວມມືກັນໃນຂັ້ນຕໍ່ໄປເພື່ອເຮັດໃຫ້ສູນມີການຄຸ້ມຄອງ ແລະ ພັດທະນາແບບຍືນຍົງ ກ້າວໄປເຖິງການສາມາດກຸ້ມຕົນເອງທາງດ້ານການເງິນ.

7) ໂຄງການປັບປຸງລະບົບສຸຂະອະນາໄມພືດແຫ່ງຊາດ ແລະ ໂຄງການສ້າງລະບົບຄວບຄຸມພະຍາດສັດຕາມຊາຍແດນ.

8) ການຊ່ວຍເຫຼືອໃນການສ້າງລະບົບສາງສະສົມແຫ່ງລັດ ເພື່ອສະສົມສໍາຮອງເຄື່ອງອຸປະໂພກ ແລະ ບໍລິໂພກຕ່າງໆ ໄວ້ໃນກໍລະນີເກີດໄພພິບັດຕ່າງໆ.

9) ໂຄງການຝຶກອົບຮົມພະນັກງານໃນຂະແໜງການຕ່າງໆ.

- **ຝ່າຍຈີນມີຄໍາເຫັນວ່າ:**

- ໂຄງການກໍ່ສ້າງເຮືອນຮັບແຂກປະມຸກລັດນັ້ນ ໄດ້ກໍ່ສ້າງສໍາເລັດ ແລະ ມອບຮັບໃນເດືອນມີນາ 2014 ແລ້ວ, ປະຈຸບັນ ທັງສອງຝ່າຍຍັງມີຫຼາຍໂຄງການຂະໜາດໃຫຍ່ ທີ່ກໍາລັງປະຕິບັດນໍາກັນ ເຊັ່ນ: ໂຄງການກໍ່ສ້າງຕຶກອາຄານສໍານັກງານສູນກາງພັກ ແລະ ອື່ນໆ. ຫວັງວ່າ ທັງສອງຝ່າຍ ຈະສຸມໃສ່ໂຄງການທີ່ຕົກລົງກັນແລ້ວນັ້ນກ່ອນ.

- ຝ່າຍຈີນຍິນດີຈະສະໜອງທຶນຊ່ວຍເຫຼືອໂຄງການຊ່ວຍເຫຼືອດ້ານເຕັກນິກ ແລະ ອຸປະກອນ ສໍາລັບສໍາຫຼວດພົນລະເມືອງ ແລະ ໂຄງການສະໜອງອຸປະກອນຮັບໃຊ້ການເປັນເຈົ້າພາບກອງປະຊຸມອາຊຽນ ໃນປີ 2016. ສະເໜີໃຫ້ຝ່າຍລາວ ສະໜອງລາຍລະອຽດຄວາມຕ້ອງການໃຫ້ແກ່ຝ່າຍຈີນ ໂດຍໄວ.

- ກ່ຽວກັບໂຄງການພັດທະນາສູນສາທິດ ແລະ ບໍລິການເຕັກນິກກະສິກໍາ. ຝ່າຍຈີນເຫັນວ່າການດໍາເນີນການຮ່ວມມືໄລຍະ 1 ດໍາເນີນໄປຢ່າງສະດວກ ແລະ ມີຄວາມຄືບໜ້າດີ. ຝ່າຍຈີນຈະສືບຕໍ່ຄົ້ນຄວ້າຢ່າງຕັ້ງໜ້າ ກ່ຽວກັບການຮ່ວມມື ໃນບາດກ້າວຕໍ່ໄປ ໂດຍອີງຕາມຄວາມຕ້ອງການຂອງຝ່າຍລາວ.

- ກ່ຽວກັບການຊ່ວຍເຫຼືອຝຶກອົບຮົມພະນັກງານນັ້ນ, ໃນປີ 2014 ຈະໄດ້ຈັດການສໍາມະນາ-ຝຶກອົບຮົມ ໃຫ້ແກ່ຝ່າຍລາວ 4 ຫົວຂໍ້ ຄື: ວຽກງານການເຂົ້າເປັນສະມາຊິກ WTO; ການຄ້າຊາຍແດນ; ການຄຸ້ມຄອງເຂດເສດຖະກິດພິເສດ ແລະ ວຽກງານການຕ່າງປະເທດຂອງພະນັກງານສະພາແຫ່ງຊາດ, ຍິນດີຕ້ອນຮັບຝ່າຍລາວ ສົ່ງພະນັກງານເຂົ້າຮ່ວມການຝຶກອົບຮົມດັ່ງກ່າວ. ຖ້າຫາກວ່າ ຍັງມີຄວາມຕ້ອງການດ້ານອື່ນອີກ ເຊັ່ນ: ການຝຶກອົບຮົມວິຊາການທາງລົດໄຟ, ຝ່າຍລາວ ກໍສາມາດສະເໜີໄດ້, ຝ່າຍຈີນ ຈະສຶກສາຄົ້ນຄວ້າຢ່າງຕັ້ງໜ້າ ເພື່ອຈັດເຂົ້າແຜນການຊ່ວຍເຫຼືອໃນປີຕໍ່ໄປ.

- ສໍາລັບໂຄງການອື່ນໆ ທີ່ຝ່າຍລາວ ສະເໜີຂຶ້ນໃນກອງປະຊຸມນັ້ນ, ຝ່າຍຈີນ ຈະໄດ້ຈັດເຂົ້າໃນຄັງບັນຊີໂຄງການເພື່ອຄົ້ນຄວ້າຈັດເຂົ້າແຜນຕໍ່ໄປຕາມຂັ້ນຕອນ, ຫວັງວ່າຝ່າຍລາວ ຈະເຂົ້າໃຈ.

3. <u>ການປັບປຸງກົນໄກການສະເໜີ ແລະ ອະນຸຍາດການສໍາຫຼວດ ແລະ ກໍ່ສ້າງໂຄງການພື້ນຖານໂຄງລ່າງທີ່ນໍາໃຊ້ເງິນກູ້.</u>

- ຝ່າຍລາວສະເໜີຢາກໃຫ້ແບ່ງການຊ່ວຍເຫຼືອອອກເປັນ ສອງສ່ວນ ຄື: ສ່ວນໜຶ່ງແມ່ນຊ່ວຍເຫຼືອເພື່ອຈັດຈ້າງບໍລິສັດທີ່ປຶກສາມາສໍາຫຼວດອອກແບບ ແລະ ອີກສ່ວນໜຶ່ງແມ່ນຊ່ວຍເຫຼືອເພື່ອຈັດຈ້າງບໍລິສັດຮັບເໝົາກໍ່ສ້າງ, ທັງສອງສ່ວນນີ້ຢາກໃຫ້ມີການປະມູນ, ແນໃສ່ເພື່ອຫຼຸດຜ່ອນຕົ້ນທຶນຂອງໂຄງການ.

- ຝ່າຍຈີນມີຄໍາເຫັນວ່າ: ຝ່າຍລາວສາມາດຄັດເລືອກບໍລິສັດ ຕາມຄວາມຕ້ອງການຂອງຕົນ ພາຍໃນຂອບເຂດບັນຊີລາຍຊື່ບໍລິສັດທີ່ຝ່າຍຈີນແນະນໍາໃຫ້. ພາກສ່ວນກ່ຽວຂ້ອງຂອງຝ່າຍຈີນ ຈະໃຫ້ການຮ່ວມມືປະສານສົມທົບກັບຝ່າຍລາວ ເພື່ອເຮັດວຽກນີ້ໃຫ້ດີ.

4. ການສົມທຽບບັນຊີບ້ວງເງິນຊ່ວຍເຫຼືອລ້າ ແລະ ບ້ວງເງິນກູ້ບໍ່ມີດອກເບ້ຍ

- ຝ່າຍລາວສະເໜີ ປັບປຸງກົນໄກການຕິດຕາມ ແລະ ສົມທຽບບັນຊີນຳກັນໃຫ້ມີປະສິດທິຜົນຕື່ມ ສຳລັບບ້ວງເງິນຊ່ວຍເຫຼືອລ້າ ແລະ ບ້ວງເງິນກູ້ບໍ່ມີດອກເບ້ຍ, ໂດຍການເປີດບັນຊີສະກຸນເງິນຍວນຮ່ວມກັນ ຄືດັ່ງທີ່ ທະນາຄານແຫ່ງ ສປປ ລາວ ໄດ້ສະເໜີເຖິງທະນາຄານ ພັດທະນາແຫ່ງຊາດຈີນແລ້ວ.

- ຝ່າຍຈີນມີຄຳເຫັນວ່າ: ສອງຝ່າຍໄດ້ສ້າງຕັ້ງ ລະບົບການສົມທຽບບັນຊີຢ່າງຄົບຊຸດ, ຝ່າຍລາວສາມາດສອບຖາມ ແລະ ກວດສອບສະພາບການນຳໃຊ້ທຶນຊ່ວຍເຫຼືອ ຂອງ ສປ ຈີນ ນຳ ທະນາຄານ ແຫ່ງ ສປປ ລາວ ໄດ້. ໃນຂັ້ນຕໍ່ໄປຝ່າຍຈີນ ຈະສືບຕໍ່ຊຸກຍູ້ ທະນາຄານ CDB ເຊັນຂໍ້ຕົກລົງກ່ຽວກັບຂັ້ນຕອນການສົມທຽບ ແລະ ຕິດຕາມບັນຊີ, ເພື່ອເຮັດໃຫ້ວຽກງານການສົມທຽບບັນຊີໄດ້ຮັບການປະຕິບັດຢ່າງມີປະສິດທິຜົນ.

5. ການສົ່ງເສີມສິນຄ້າຜະລິດຕະພັນກະສິກຳຂອງລາວ ເຂົ້າສູ່ຕະຫຼາດຈີນໃຫ້ສະດວກຂຶ້ນ ແລະ ຫຼາຍຂຶ້ນ.

- ຝ່າຍລາວໄດ້ແຈ້ງໃຫ້ຝ່າຍຈີນຊາບວ່າ ປະຈຸບັນ, ສປປ ລາວ ພວມປຶກສາຫາລື ກັບ ກຸ່ມບໍລິສັດເປີຍຕ້າຮ່ວາງ ເພື່ອສົ່ງເສີມການຮ່ວມມືກັນ ໃນຂົງເຂດກະສິກຳ, ເຊິ່ງໃນອະນາຄົດຈະມີສິນຄ້າກະສິກຳຫຼາຍຊະນິດທີ່ຢາກຈະສົ່ງມາຕະຫຼາດຈີນເພີ່ມຂຶ້ນອີກ. ສະເໜີຝ່າຍຈີນ ຫຼຸດຜ່ອນອັດຕາພາສີນຳເຂົ້າສິນຄ້າກະສິກຳອື່ນໆ ຈາກ ລາວ ຕາມທີ່ລາວຜະລິດໄດ້.

- ຝ່າຍຈີນຍິນດີຕ້ອນຮັບຜະລິດຕະພັນກະສິກຳ ຈາກ ສປປ ລາວ ທີ່ສອດຄ່ອງກັບມາດຕະຖານການບຳບັດ ແລະ ກັກກັນສຸຂະອານາໄມ ແລະ ຄຸນນະພາບ ຂອງ ສປ ຈີນ. ປະຈຸບັນ ສອງຝ່າຍໄດ້ເຊັນຂໍ້ຕົກລົງນຳກັນແລ້ວ ສຳລັບສາລີ, ກ້ວຍ, ໝາກໂມ ແລະ ມັນຕົ້ນແຫ້ງ. ສຳລັບປະເພດອື່ນນັ້ນ, ຝ່າຍລາວສາມາດສະເໜີເອກະສານເຕັກນິກທີ່ກ່ຽວຂ້ອງຕໍ່ພາກສ່ວນທີ່ຮັບຜິດຊອບຂອງຝ່າຍຈີນ ໂດຍອີງຕາມມາດຕະຖານການກັກກັນສຸຂະອານາໄມ ແລະ ຄຸນນະພາບ ຂອງ ສປ ຈີນ. ຝ່າຍຈີນຈະພິຈາລະນາ ຢ່າງຕັ້ງໜ້າ.

- ຝ່າຍຈີນ ສະເໜີຝ່າຍລາວເພີ່ມທະວີການໂຄສະນາຜະລິດຕະພັນກະສິກຳຂອງລາວ ທີ່ເປັນທ່າແຮງ ໂດຍຜ່ານການແລກປ່ຽນ ລະຫວ່າງ ຂະແໜງການຂອງສອງຝ່າຍ, ຜ່ານການເຂົ້າຮ່ວມງານສະແດງສິນຄ້າຕ່າງໆ ຢູ່ ຈີນ, ຜ່ານການເປີດກວ້າງຕາໜ່າງ ໂຄສະນາ ແລະ ການຕະຫຼາດ ເພື່ອໃຫ້ຜູ້ບໍລິໂພກຂອງຈີນ ຮູ້ຈັກສິນຄ້າ ກະສິກຳລາວຫຼາຍຂຶ້ນ.

6. ກ່ຽວກັບການຊື້ປະກັນໄພເງິນກູ້ສຳລັບໂຄງການພັດທະນາໂຄງລ່າງດ້ານພະລັງງານ.

- ຝ່າຍລາວສະເໜີໃຫ້ຍົກເວັ້ນການຊື້ປະກັນໄພເງິນກູ້ ສຳລັບໂຄງການພັດທະນາໂຄງລ່າງດ້ານພະລັງງານ.

- **ຝ່າຍຈີນມີຄຳເຫັນວ່າ:** ການຊື້ປະກັນໄພເງິນກູ້ແມ່ນເປັນໄປຕາມພາກປະຕິບັດຂອງສາກົນ. ໂດຍຜ່ານກົນໄກການປະກັນໄພ, ສາມາດຂະຫຍາຍຂະໜາດການລະດົມທຶນທາງດ້ານການຄ້າ, ຊຸກຍູ້ໂຄງການຮ່ວມມືເສດຖະກິດ-ເຕັກນິກ ລະຫວ່າງສອງປະເທດ ໃຫ້ຂະຫຍາຍຕົວ. ຝ່າຍຈີນຈະສົ່ງເສີມບັນດາບໍລິສັດຈີນຂະຫຍາຍການຮ່ວມມືໃນຂົງເຂດພະລັງງານ ກັບ ຝ່າຍລາວ ໂດຍອີງໃສ່ຕາມຫຼັກການຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ. ສະເໜີຝ່າຍລາວເຈລະຈາກັບບັນດາອົງການການເງິນຂອງຈີນ ເພື່ອປຶກສາຫາລື ກ່ຽວກັບຮູບແບບການລະດົມທຶນທີ່ສາມາດເປັນໄປໄດ້.

7. ກ່ຽວກັບການສ້າງແຜນຮ່ວມມືດ້ານເສດຖະກິດ-ເຕັກນິກລາວ-ຈີນ 5 ປີຄັ້ງຕໍ່ໄປ

- ຝ່າຍລາວໄດ້ແຈ້ງວ່າ: ໃນຈຳນວນ 80 ໂຄງການທີ່ຈັດຢູ່ໃນແຜນຮ່ວມມື 5 ປີ (2011-2015) ນັ້ນ, ໄດ້ຮັບການຈັດຕັ້ງປະຕິບັດແລ້ວປະມານເຄິ່ງໜຶ່ງເທົ່ານັ້ນ, ແຕ່ຍ້ອນມີຄວາມຕ້ອງການເພີ່ມຂຶ້ນ ຝ່າຍລາວໄດ້ສະເໜີ

ໂຄງການໃໝ່ເປັນຈຳນວນຫຼາຍສົມຄວນ; ໃນຂະນະດຽວກັນນັ້ນ ການໃຫ້ການຊ່ວຍເຫຼືອຂອງຝ່າຍຈີນ ຊໍ້າພັດມີລັກສະນະເຂັ້ມງວດ ແລະ ຈຳກັດ. ສະນັ້ນ, ຈຶ່ງສະເໜີວ່າ ໃນການສ້າງແຜນ 5 ປີຄັ້ງຕໍ່ໄປ ໃຫ້ວິຊາການທັງສອງຝ່າຍເປີກສາຫາລືກັນລະອຽດ ເພື່ອໃຫ້ແຜນດັ່ງກ່າວເປັນອັນທີ່ສົມເຫດສົມຜົນ ແລະ ມີຄວາມສາມາດຈັດຕັ້ງປະຕິບັດໄດ້.

- **ຝ່າຍຈີນມີຄຳເຫັນວ່າ:** ເຫັນດີໃຫ້ວິຊາການສອງຝ່າຍປຶກສາຫາລືການສ້າງແຜນຮ່ວມມື 5 ປີ ອັນໃໝ່ ບົນພື້ນຖານການຈັດຕັ້ງປະຕິບັດໃຫ້ໄດ້ດີແຜນການຮ່ວມມືທີ່ໄດ້ເຊັນກັນແລ້ວ.

8. <u>ການສົ່ງເສີມວິສາຫະກິດຈີນມາລົງທຶນໃນໂຄງການພື້ນຖານໂຄງລ່າງ</u>

- ຝ່າຍລາວສະເໜີວ່າ: ອີງໃສ່ສະພາບທີ່ EXIM Bank ຂອງຈີນມີນະໂຍບາຍໃໝ່ໃນການປ່ອຍເງິນກູ້, ເຮັດໃຫ້ຝ່າຍລາວມີ ຄວາມຫຍຸ້ງຍາກໃນການຈະໄດ້ຮັບເງິນກູ້, ສະນັ້ນ ສະເໜີຝ່າຍຈີນສົ່ງເສີມວິສາຫະກິດຈີນທີ່ມີຄວາມສາມາດ ໄປລົງທຶນໃສ່ໂຄງການກໍ່ສ້າງພື້ນຖານໂຄງລ່າງດ້ວຍຫຼາຍຮູບແບບ ລວມທັງຮູບແບບ BOT.

- **ຝ່າຍຈີນມີຄຳເຫັນວ່າ:** ຝ່າຍຈີນ ຈະສະໜັບສະໜູນ ບໍລິສັດຈີນ ມາລົງທຶນ ແລະ ປະຕິບັດໂຄງການກໍ່ສ້າງພື້ນຖານໂຄງລ່າງດ້ວຍຮູບແບບ BOT ແລະ ຮູບແບບອື່ນໆອີກ, ຫວັງວ່າຝ່າຍລາວ ຈະສະໜັບສະໜູນດ້ວຍການສະໜອງສະພາບແວດລ້ອມການລົງທຶນ ທີ່ສະດວກ ແລະ ມີນະໂຍບາຍສົ່ງເສີມຕໍ່ບໍລິສັດຈີນ.

9. <u>ເພີ່ມທະວີການຮ່ວມມືໃນດ້ານການສ້າງເຂດເສດຖະກິດຮ່ວມມືຊາຍແດນ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ</u>

1.) ເຂດຮ່ວມມືເສດຖະກິດບໍ່ເຕ່ນ-ບໍ່ຫານ

ຝ່າຍລາວ ສະເໜີໃຫ້ລັດຖະບານ ສປ ຈີນສືບຕໍ່ຊຸກຍູ້, ສະໜັບສະໜູນການພັດທະນາເຂດຮ່ວມມືເສດຖະກິດບໍ່ເຕ່ນ-ບໍ່ຫານ ຕາມ MOU ທີ່ໄດ້ເຊັນກັນ, ໃນນັ້ນ, ໃຫ້ສອງຝ່າຍຮ່ວມກັນຄົ້ນຄວ້າບັນດານະໂຍບາຍສົ່ງເສີມເຊັ່ນ: ນະໂຍບາຍອຳນວຍຄວາມສະດວກໃນການເຂົ້າ-ອອກດ່ານ, ນະໂຍບາຍດ້ານສິນຄ້າ, ການຄ້າ ແລະ ການນຳເຂົ້າສົ່ງອອກ, ການສ້າງພື້ນຖານໂຄງລ່າງພາຍໃນເຂດ ແລະ ເຊື່ອມຕໍ່ກັບນອກເຂດ, ນະໂຍບາຍດ້ານການເງິນ ແລະ ອື່ນໆ ເພື່ອເຮັດໃຫ້ເຂດຮ່ວມມືເສດຖະກິດດັ່ງກ່າວກາຍເປັນເຂດຮ່ວມມືຕົວແບບ ແລະ ເປັນຫົວຈັກແກ່ດຶງການພັດທະນາບັນດາຕົວເມືອງ ແລະ ແຂວງອ້ອມຂ້າງ.

2.) ເຂດພັດທະນາກວມລວມໄຊເຊດຖາ

ປະຈຸບັນຄະນະກຳມະການປະສານງານຂັ້ນລັດຖະບານ ແລະ ຄະນະຄຸ້ມຄອງເຂດພັດທະນາກວມລວມໄຊເຊດຖາ ຂອງຝ່າຍລາວ ແມ່ນໄດ້ສ້າງຕັ້ງຂຶ້ນແລ້ວ, ສະເໜີຝ່າຍຈີນແຕ່ງຕັ້ງຄະນະປະສານງານຂັ້ນລັດຖະບານ ແລະ ຄະນະຄຸ້ມຄອງເຂດໂດຍໄວ ເພື່ອເຮັດໃຫ້ກົນໄກປະສານງານຂອງສອງຝ່າຍສົມບູນຂຶ້ນ.

3.) ສະເໜີຝ່າຍຈີນສະໜັບສະໜູນບັນດາບໍລິສັດຂອງ ສປ ຈີນ ທີ່ມາລົງທຶນຢູ່ ໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໂດຍພິຈາລະນາໃຫ້ເງິນກູ້ຢືມ ແກ່ບໍລິສັດຜູ້ພັດທະນາ ຫຼື ບໍລິສັດເອກະຊົນອື່ນໆ ມາພັດທະນາພື້ນຖານໂຄງລ່າງໃນເຂດດັ່ງກ່າວ.

- ຝ່າຍຈີນມີຄຳເຫັນວ່າ:

- ສໍາລັບເຂດຮ່ວມມືເສດຖະກິດບໍ່ເຕ່ນ-ບໍ່ຫານ, ຝ່າຍຈີນ ຈະໄດ້ແຕ່ງຕັ້ງ ຄະນະສໍາຫຼວດ ຈາກ ກະຊວງການຄ້າ ສປ ຈີນ ມາສໍາຫຼວດ ແລະເຮັດວຽກ ຢູ່ ສປປ ລາວ ໃນເດືອນໜ້າ ແລະ ຈະໄດ້ປຶກສາຫາລືກັນ ກ່ຽວກັບ ບັນຫາການສ້າງນະໂຍບາຍຕ່າງໆ ທີ່ຝ່າຍລາວ ສະເໜີມາຂ້າງເທິງນັ້ນ.

- ສໍາລັບເຂດພັດທະນາກວມລວມໄຊເຊດຖາ ປະຈຸບັນມີ 5 ບໍລິສັດໄດ້ມາປະຈໍາຢູ່ເຂດດັ່ງກ່າວ, ຝ່າຍຈີນ ເຫັນວ່າ: ກົນໄກປະສານງານຂອງຄະນະກໍາມະການຮ່ວມມື ຂອງສອງປະເທດ ລາວ-ຈີນ ແມ່ນປະຕິບັດວຽກງານໄດ້ຢ່າງມີປະສິດທິຜົນດີແລ້ວ, ສະເໜີແຕ່ງຕັ້ງຄະນະປະສານງານພາຍໃຕ້ຂອບຂອງຄະນະກໍາມາທິການຮ່ວມມືລາວ-ຈີນ. ຝ່າຍຢຸນນານ ໄດ້ລາຍງານບັນຊີລາຍຊື່ ຂອງຄະນະປະສານງານດັ່ງກ່າວ ໃຫ້ ແກ່ ກະຊວງການຄ້າ ຈີນ ແລ້ວ ແລະຈະແຈ້ງໃຫ້ຝ່າຍລາວຊາບໂດຍໄວ.

- ນອກນັ້ນຍັງໄດ້ສະເໜີຄໍາເຫັນ 2 ຂໍ້ ຄື: 1.) ໃຫ້ສອງຝ່າຍປຶກສາຫາລື ກ່ຽວກັບການສ້າງນະໂຍບາຍອໍານວຍຄວາມສະດວກໃຫ້ ແກ່ບໍລິສັດຂອງຝ່າຍຈີນເຂົ້າມາລົງທຶນໃນເຂດດັ່ງກ່າວ. 2.) ອີງຕາມສັນຍາທີ່ທັງສອງຝ່າຍໄດ້ເຊັນກັນ, ສະເໜີໃຫ້ຝ່າຍລາວ ຮີບຮ້ອນປະຕິບັດວຽກງານການຍົກຍ້າຍ ແລະ ກໍາຈັດສິ່ງກີດຂວາງໃນເຂດ ດັ່ງກ່າວໂດຍໄວ.

## III. <u>ການປຶກສາຫາລືຕາມຫົວຂໍ້ສົນໃຈຂອງຝ່າຍຈີນ:</u>

### 1. <u>ການຮ່ວມມືດ້ານການສ້າງແຜນ:</u>

- ຝ່າຍຈີນ ໄດ້ແຈ້ງວ່າ: ທະນາຄານ CDB ໄດ້ໃຫ້ການຊ່ວຍເຫຼືອໃຫ້ຄໍາປຶກສາໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 7 ແລະ ປະຈຸບັນ ກໍາລັງກະກຽມເກັບກໍາຂໍ້ມູນວຽກງານສ້າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 ຂອງ ສປປ ລາວ ແລະ EXIM Bank ກໍໄດ້ຊ່ວຍສ້າງແຜນພັດທະນາເສັ້ນທາງທົ່ວປະເທດຂອງ ສປປ ລາວ. ສະເໜີສອງຝ່າຍ ສຸມໃສ່ການປະຕິບັດການສ້າງແຜນພັດທະນາເສັ້ນທາງກ່ອນ, ແລ້ວຕໍ່ໄປຈຶ່ງເບິ່ງການສ້າງແຜນໃນຂົງເຂດອື່ນ.

- ຝ່າຍລາວຕີລາຄາສູງຕໍ່ CDB ທີ່ໄດ້ຊ່ວຍເຫຼືອໃຫ້ການປຶກສາ ໃນການສ້າງແຜນ 5 ປີ ຄັ້ງທີ 7 ຂອງ ສປປ ລາວ. ສໍາລັບວຽກງານການສ້າງແຜນ 5 ປີ ຄັ້ງທີ 8 ນີ້, ກໍສະເໜີໃຫ້ CDB ໃຫ້ການຮ່ວມມືຕາມຮູບແບບທີ່ເຄີຍປະຕິບັດມາ. ໄດ້ແນະນໍາໃຫ້ ກະຊວງແຜນການ ແລະ ການລົງທຶນ ເຊີນນັກຊ່ຽວຊານດ້ານເສດຖະກິດ ຂອງ ສປ ຈີນ ມາຮ່ວມກອງປະຊຸມສໍາມະນາ ກ່ຽວກັບແຜນ 5 ປີ ຄັ້ງທີ 8 ແລະ ວິໄສທັດ ປີ 2030 ຂອງ ສປປ ລາວ, ຝ່າຍລາວຍິນດີຕ້ອນຮັບ.

### 2. <u>ການຊື້ຮຸ້ນທະນາຄານລາວກໍ່ສ້າງ</u>

- **ຝ່າຍຈີນໄດ້ແຈ້ງວ່າ:** ວິສາຫະກິດຈີນທີ່ໄດ້ຊື້ຮຸ້ນ 60% ຂອງທະນາຄານລາວກໍ່ສ້າງ ໄດ້ຖືກຜູ້ຖືຮຸ້ນຂອງຝ່າຍລາວກີດຂວາງໃນການເຂົ້າມາບໍລິຫານທະນາຄານດັ່ງກ່າວ, ເຮັດໃຫ້ປະຈຸບັນຍັງບໍ່ໄດ້ມີການມອບຮັບກັນເທື່ອ. ຝ່າຍຈີນຫວັງວ່າ ຝ່າຍລາວ ຈະເອົາໃຈໃສ່ຊ່ວຍເຫຼືອເພື່ອປົກປ້ອງສິດຜົນປະໂຫຍດ ຂອງ ນັກລົງທຶນຈີນ, ເຮັດໃຫ້ບັນດານັກລົງທຶນຈີນ ຮັບຮູ້ວ່າ ສະພາບການລົງທຶນ ຢູ່ ສປປ ລາວ ມີຄວາມເປັນທໍາ ແລະ ສະເໝີພາບ.

- **ຝ່າຍລາວມີຄໍາເຫັນວ່າ:** ບັນຫານີ້ ແມ່ນບໍລິສັດຈີນ ກັບ ບໍລິສັດຈີນ ໄດ້ໄປປຶກສາຫາລື ແລະ ຕົກລົງກັນເອງ ໂດຍທາງການລາວ ບໍ່ໄດ້ ຮູ້ນໍາ, ຈົນເກີດມີບັນຫາຜິດກັນແລ້ວ ບໍລິສັດຈີນຈຶ່ງເຮັດໜັງສືມາຮ້ອງຂໍຄວາມຊ່ວຍເຫຼືອ. ຝ່າຍລາວ ຈະໄດ້ກັບໄປສອບຖາມລາຍລະອຽດ ກັບພາກສ່ວນທີ່ກ່ຽວຂ້ອງຕື່ມ ເພື່ອຫາວິທີແກ້ໄຂທີ່ສອດຄ່ອງ.

3. <u>ການຮ່ວມມືພາກພື້ນ (ການຮ່ວມມືເສດຖະກິດອ່າວ Pan-Beibu)</u>

- **ຝ່າຍຈີນໄດ້ແຈ້ງວ່າ:** ການຮ່ວມມືເສດຖະກິດອ່າວ Pan-Beibu ໄດ້ຮັບຄຳຕອບອັນຕັ້ງໜ້າ ຈາກບັນດາປະເທດໃນພາກພື້ນ, ພາຍໃຕ້ການນຳພາຂອງທະນາຄານ ADB ບັນດາຝ່າຍທີ່ກ່ຽວຂ້ອງໄດ້ເຈລະຈາ ແລະ ຮັບຮອງແຜນທິດທາງການຮ່ວມມື ເສດຖະກິດອ່າວPan-Beibu ໃນເດືອນເມສາ 2014, ຝ່າຍຈີນ ເຫັນວ່າການຮ່ວມມືເຂດເສດຖະກິດ Pan-Beibu ຈະເປັນເຂດຮ່ວມມືເສດຖະກິດພາກພື້ນອັນໜຶ່ງທີ່ສຳຄັນ ໃນການຮ່ວມມືເສດຖະກິດ-ການຄ້າ ຈີນ-ອາຊຽນ, ຫວັງວ່າຝ່າຍລາວ ຈະເຂົ້າຮ່ວມຢ່າງຫ້າວຫັນ.

- ຝ່າຍລາວຊົມເຊີຍຂໍ້ສະເໜີລິເລີ່ມຂອງຝ່າຍຈີນໃນການສ້າງຂອບການຮ່ວມມືອ່າວ Pan-Beibu ເຊິ່ງເປັນສ່ວນໜຶ່ງຂອງການຮ່ວມມື ລະຫວ່າງ ຈີນ ກັບ ອາຊຽນ. ແຕ່ເຫັນວ່າ ລາຍລະອຽດຕ່າງໆ ກ່ຽວກັບເລື່ອງນີ້ ຍັງບໍ່ໄດ້ຮັບຄວາມເປັນເອກະພາບກັນ ລະຫວ່າງ ບັນດາປະເທດສະມາຊິກອາຊຽນ. ສະນັ້ນເຫັນຄວນໃຫ້ວິຊາການທີ່ກ່ຽວຂ້ອງຂອງຈີນ ແລະ ອາຊຽນ ສືບຕໍ່ປຶກສາຫາລືກັນຕື່ມ.

4. <u>ໂຄງການສວນກະສິກຳຄົບວົງຈອນ ຊຽງຊຽງ ແລະ ລາວ:</u>

- ຝ່າຍຈີນໄດ້ສະເໜີວ່າ: ໂຄງການດັ່ງກ່າວ ນະຄອນຊຽງຊຽງ ໄດ້ລົງທຶນປະມານ 10 ລ້ານ ຢວນ, ໄລຍະເວລາສຳປະທານທີ່ດິນ 10 ປີ (11/2004 -11/2014). ແຕ່ໃນສະພາບປະຈຸບັນ ເຫັນວ່າ ໃຫ້ວິສາຫະກິດເປັນເຈົ້າການ ແລະ ດຳເນີນທຸລະກິດຕາມກົນໄກຕະຫຼາດ ຈະເຮັດໃຫ້ໂຄງການພັດທະນາກ້າວໄປຢ່າງມີປະສິດທິຜົນກວ່າ, ສະນັ້ນ ອຳນາດການປົກຄອງນະຄອນຊຽງຊຽງ ຈຶ່ງໄດ້ຕັດສິນໃຈວ່າ ພາຍຫຼັງໝົດກຳນົດສຳປະທານ ໃນເດືອນພະຈິກ 2014 ນະຄອນຊຽງຊຽງຈະຢຸດຕິການປະຕິບັດສັນຍາກ່ຽວກັບໂຄງການດັ່ງກ່າວ ແລະ ມອບໃຫ້ບໍລິສັດຂອງຈີນປະຕິບັດຕໍ່. ໄດ້ຕິດຕໍ່ພົວພັນກັບຝ່າຍນະຄອນຫຼວງວຽງຈັນຫຼາຍຄັ້ງແລ້ວ ລວມທັງໄດ້ເຮັດໜັງສືທາງການມາສະເໜີ, ແຕ່ຍັງບໍ່ໄດ້ຮັບການຕອບເປັນທາງການ ຈາກ ຝ່າຍລາວ ເທື່ອ. ສະເໜີຝ່າຍລາວ ແຈ້ງຕອບຝ່າຍຈີນ ຢ່າງເປັນລາຍລັກອັກສອນທາງການດ້ວຍ. ຝ່າຍຈີນ ຈະຮ່ວມມືກັບຝ່າຍລາວ ໃນການກະກຽມວຽກງານທີ່ກ່ຽວຂ້ອງກ່ອນການຢຸດຕິການປະຕິບັດສັນຍາໂຄງການດັ່ງກ່າວ.

- **ຝ່າຍລາວມີຄຳເຫັນວ່າ:** ຈະຖາມນະຄອນຫຼວງວຽງຈັນ ແລະ ຊຸກຍູ້ໃຫ້ມີຄຳຕອບເປັນລາຍລັກອັກສອນ ໃຫ້ແກ່ນະຄອນຊຽງຊຽງ. ຫວັງວ່າ ນະຄອນຊຽງຊຽງ ຖ້າວ່າບໍ່ໄດ້ປະຕິບັດໂຄງການນີ້, ກໍຍັງຈະສືບຕໍ່ປະຕິບັດໂຄງການອື່ນ ຢູ່ ສປປ ລາວ ອີກ.

## IV. <u>ການສະເໜີ ຂອງ ວິສາຫະກິດ ຈີນ</u>

- ໃນກອງປະຊຸມຄັ້ງນີ້, ຝ່າຍຈີນ ໄດ້ສະເໜີໃຫ້ພາກທຸລະກິດ ທີ່ເຂົ້າຮ່ວມກອງປະຊຸມ ປະກອບຄຳເຫັນ, ເຊິ່ງມີ 5 ພາກສ່ວນໄດ້ປະກອບຄຳເຫັນຄື: ທະນາຄານພັດທະນາແຫ່ງຊາດຈີນ (CDB), ທະນາຄານຂາເຂົ້າ-ຂາອອກ ຈີນ (EXIM Bank) , ກຸ່ມບໍລິສັດພະລັງງານຈີນ (Power China/ Sino Hydro), ບໍລິສັດ CWE ແລະ ກຸ່ມບໍລິສັດ China-Agri.

- ການປະກອບຄຳເຫັນ ສ່ວນໃຫຍ່ແມ່ນການສະເໜີຜົນງານຂອງ ແຕ່ລະບໍລິສັດໃນການດຳເນີນທຸລະກິດຂອງຕົນຢູ່ ລາວ, ຫວັງຢາກໃຫ້ລັດຖະບານລາວສືບຕໍ່ປັບປຸງສະພາບແວດລ້ອມໃນການລົງທຶນ ໃຫ້ດີ ກວ່າເກົ່າ ເຊັ່ນ: ກຳນົດລະບຽບກົດໝາຍໃຫ້ໝັ້ນຄົງ ແລະ ຄົບຊຸດກວ່າເກົ່າ, ໃຫ້ນະໂຍບາຍພິເສດດ້ານຕ່າງໆ ລວມທັງດ້ານພາສີ-ອາກອນ, ຫຼຸດຜ່ອນຂັ້ນຕອນໃນການອະນຸມັດໂຄງການ ແລະ ເພີ່ມອັດຕາສ່ວນການນຳໃຊ້ແຮງງານຈາກຕ່າງປະເທດ.

- ບັນດາບໍລິສັດລ້ວນແຕ່ມີຄວາມຫວັງຢາກເຫັນໂຄງການສ້າງທາງລົດໄຟລາວ-ຈີນ ເກີດຂຶ້ນໄວ.

- ຝ່າຍລາວໄດ້ຊົມເຊີຍຜົນງານ ຂອງແຕ່ລະທະນາຄານ ແລະ ບໍລິສັດຂອງຈີນ ທີ່ໄດ້ປະກອບສ່ວນເຮັດໃຫ້ການຮ່ວມມືດ້ານເສດຖະກິດ-ການຄ້າ ການລົງທຶນ ລະຫວ່າງລາວ-ຈີນ ມີການຂະຫຍາຍຕົວ; ຂໍ້ສະເໜີຂອງແຕ່ລະພາກສ່ວນນັ້ນ ຝ່າຍລາວໄດ້ບັນທຶກໄວ້ ແລະ ຈະນໍາໄປຄົ້ນຄວ້າພິຈາລະນາ; ຫວັງວ່າ ບັນດາບໍລິສັດຂອງຈີນ ຈະສືບຕໍ່ມາລົງທຶນ ຢູ່ ລາວ; ຮຽກຮ້ອງໃຫ້ບໍລິສັດຂອງຈີນ ເອົາໃຈໃສ່ບັນຫາຮັກສາສິ່ງແວດລ້ອມ.

## V. ການກໍານົດວັນເວລາ ແລະ ສະຖານທີ່ຈັດກອງປະຊຸມ ໃນຄັ້ງຕໍ່ໄປ:

ສອງຝ່າຍເຫັນດີຈັດກອງປະຊຸມຄະນະກໍາມາທິການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ເຕັກນິກ ລາວ-ຈີນ ຄັ້ງທີ VII ຂຶ້ນທີ່ ສປປ ລາວ ໃນປີ 2015, ສໍາລັບວັນເວລາ ແລະ ສະຖານທີ່ປະຊຸມ ຈະແຈ້ງໃຫ້ກັນຊາບໂດຍຜ່ານທາງການທູດ.

ບົດບັນທຶກສະບັບນີ້ ໄດ້ລົງນາມ ໃນວັນທີ 03 ກັນຍາ 2014, ເຮັດເປັນ 02 ສະບັບຕົ້ນ, ແຕ່ລະສະບັບ ຂຽນເປັນພາສາລາວ ແລະ ພາສາຈີນ, ທັງສອງພາສາ ມີຄຸນຄ່າເທົ່າທຽມກັນ.

| ຕາງໜ້າ ຝ່າຍ ລາວ | ຕາງໜ້າ ຝ່າຍ ຈີນ |
|---|---|
| [signature] | [signature] |

## ເອກະສານຊ້ອນທ້າຍ 1

ລາຍຊື່ຄະນະຜູ້ແທນສປປ ລາວ:

1. ທ່ານ ສົມສະຫວາດ ເລັ່ງສະຫວັດ — ຮອງນາຍົກລັດຖະມົນຕີ, ປະທານຄະນະກຳມະທິການຮ່ວມມື ລາວ-ຈີນ, ສະຖານທູດລາວປະຈຳຢູ່ ສປ ຈີນ
2. ທ່ານ ລັດຕະນະມະນີ ຄູນນີວົງ — ລັດຖະມົນຕີຊ່ວຍວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ
3. ທ່ານ ດຣ. ພວງປະລິສັກ ປຣະວົງວຽງຄຳ — ລັດຖະມົນຕີຊ່ວຍວ່າການ ກະຊວງກະສິກຳ ແລະ ປ່າໄມ້
4. ທ່ານ ບຸນມີ ມະນີວົງ — ລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ
5. ທ່ານ ນ. ບົວທາ ຂັນທິຍະ — ຮອງປະທານ ຫົວໜ້າກອງເລຂາຄະນະກຳມະທິການແຫ່ງຊາດ ເພື່ອຄຸ້ມຄອງເຂດເສດຖະກິດພິເສດ ແລະ ເສດຖະກິດສະເພາະ
6. ທ່ານ ວິຈິດ ຊິນດາວົງ — ຮອງປະທານ ຫົວໜ້າຫ້ອງການກຳມະທິການຮ່ວມມື ລາວ-ຈີນ
7. ທ່ານ ໄພມະນີ ເຮືອງຄຳໄຊ — ຮັກສາການຫົວໜ້າກົມ ການເງິນຕ່າງປະເທດ, ກະຊວງການເງິນ
8. ທ່ານ ໄຊຊະນະ ສິດທິພອນ — ເລຂາທ່ານຮອງນາຍົກລັດຖະມົນຕີ
9. ທ່ານ ທະນຸສອນ ມະນີ — ຮອງຫົວໜ້າພະແນກ, ຫ້ອງການກຳມະທິການຮ່ວມມືລາວ-ຈີນ

## ເອກະສານຊ້ອນທ້າຍ 2

**ລາຍຊື່ຄະນະຜູ້ແທນ ສປ ຈີນ:**

(I) ຂັ້ນສູນກາງ

1. ທ່ານ ກ່າວ ຢຽນ — ລັດຖະມົນຕີຊ່ວຍວ່າການ ກະຊວງການຄ້າ
2. ທ່ານ ລ່ານເວີນ ທ່າວ — ຮອງຫົວໜ້າກົມ ອາຊີ ກະຊວງການຄ້າ
3. ທ່ານ ເປົ່າລີງ — ຮອງຫົວໜ້າກົມ ການຕ່າງປະເທດ ກະຊວງການຄ້າ
4. ທ່ານ ຢູຈື່ ລີງ — ຮອງຫົວໜ້າກົມ ຊ່ວຍເຫຼືອຕໍ່ຕ່າງປະເທດ ກະຊວງການຄ້າ
5. ທ່ານ ເຊົ່າຫົງ ຍິງ — ຮອງຫົວໜ້າກອດກາ, ການລົງທຶນຕ່າງປະເທດ ກະຊວງການຄ້າ
6. ທ່ານ ເຊີນຫຸ່ຍ ຢູນ — ທີ່ເປີກສາດ້ານການຄ້າ, ກົມຮ່ວມມື ກະຊວງການຄ້າ (ຂັ້ນຮອງຫົວໜ້າກົມ)
7. ທ່ານ ຈ່າວເວີນ ຢູ — ທີ່ເປີກສາດ້ານການຄ້າ ສະຖານທູດຈີນ ປະຈຳຢູ່ ສປປ ລາວ (ຂັ້ນຫົວໜ້າພແນກ) ຄະນະກຳມະການປະຕິຮູບ ແລະ ພັດທະນາອີງການໃຫຍ່ກວດສອບຄຸນນະພາບ.
8. ທ່ານ ຫານ ເຢ່ — ພະນັກງານວິຊາການ, ສຳນັກທີ່ເປີກສາທາງດ້ານການຄ້າ ສະຖານທູດຈີນ ປະຈຳຢູ່ ສປປ ລາວ (ແປພາສາ)

(II) ອຳນາດການປົກຄອງຂັ້ນທ້ອງຖິ່ນ

9. ທ່ານ ຊູ ຊຽງ — ຄະນະຮັບຜິດຊອບ ຄະນະກຳມະທິການຮ່ວມມືເສດຖະກິດ-ການຄ້າກັບສາກົນນະຄອນຊົງຊິງ
10. ທ່ານ ຢ່າງ ຫຸ່ຍ — ຮອງຫົວໜ້າພະແນກ ການຄ້າ ແຂວງ ຢູນນານ

(III) ຜູ້ແທນສະຖາບັນການເງິນ

11. ທ່ານ ເຈີນ ທາວ — ຮອງຫົວໜ້າພະແນກ ຮ່ວມມືສາກົນ, ທະນາຄານພັດທະນາແຫ່ງ ສປ ຈີນ
12. ທ່ານ ເມີຍຈ່ຽນ ຜິງ — ຮອງອຳນວຍການໃຫຍ່ ພະແນກທຸລະກຳວິສາຫະກິດ, ທະນາຄານ ຂາເຂົ້າ-ຂາອອກ ສປ ຈີນ
13. ທ່ານ ຫວັງຟາ ເຕີ — ຮອງອຳນວຍການໃຫຍ່ ພະແນກເງິນກູ້ພິເສດ, ທະນາຄານ ຂາເຂົ້າ-ຂາອອກ ສປ ຈີນ

(IV) ຜູ້ແທນພາກວິສາຫະກິດ

14. ທ່ານ ຊຸນຫົງ ຊຸຍ — ຮອງອຳນວຍການໃຫຍ່ ກຸ່ມບໍລິສັດ ກໍ່ສ້າງພະລັງງານໄຟຟ້າ ສປ ຈີນ ຈຳກັດ
15. ທ່ານ ລູ່ຫົງ ທາວ — ຮອງອຳນວຍກາຍໃຫຍ່ ຮ່ວມມືສາກົນ ການກໍ່ສ້າງພະລັງງານໄຟຟ້າ ແລະ ຊົນລະປະທານ ສປ ຈີນ ຈຳກັດ
16. ທ່ານ ຫວັງອີ ມິນ — ຮອງອຳນວຍການໃຫຍ່ ກຸ່ມບໍລິສັດ ວິສາວະກຳ gezhoubaຈຳກັດ
17. ທ່ານ ມາ ເຕີ — ຮອງອຳນວຍການໃຫຍ່ ກຸ່ມບໍລິສັດ ກໍ່ສ້າງ ຢູນນານ ຈຳກັດ
18. ທ່ານ ຈ່າງ ປິງ — ຮອງອຳນວຍການໃຫຍ່ ບໍລິສັດສະຫຼວດຊັບພະຍາກອນກະສິກຳ-ບໍ່ແຮ່ ຈຳກັດ
19. ທ່ານ ຈີນຢີງ ເຊີຍ — ຜູ້ຊ່ວຍອຳນວຍການໃຫຍ່ ບໍລິສັດຫຸ້ນສ່ວນວິສາວະກຳກໍ່ສ້າງສາກົນ ສປ ຈີນ ມະຫາຊົນ